ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ລັດຖະບານ ເລກທີ 362 /ລບ

ນະຄອນຫລວງວຽງຈັນ, ວັນທີ 7-10- 2014

# ດຳລັດ
# ວ່າດ້ວຍກອງທຶນມໍລະດົກແຫ່ງຊາດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ ສະບັບເລກທີ 08/ສພຊ, ລົງວັນທີ 09 ພະຈິກ 2005;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 354/ຖວທ, ລົງວັນທີ 17/06/2014.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະມາດຕະການ ກ່ຽວກັບການສ້າງຕັ້ງ, ການຄຸ້ມຄອງ, ນຳໃຊ້ ແລະຕິດຕາມ ກວດກາ ກອງທຶນມໍລະດົກແຫ່ງຊາດ ເພື່ອລະດົມ, ຂົນຂວາຍ, ສະສົມທຶນ, ສ້າງ ແລະເພີ່ມທະວີຄວາມເຂັ້ມແຂງທາງດ້ານການເງິນໂດຍລວມແຫຼ່ງທຶນຕ່າງໆ ໃຫ້ມີທຶນພຽງພໍ ແລະໝັ້ນຄົງ ລວມທັງລາຍຮັບທີ່ເກີດຂຶ້ນບົນພື້ນຖານມໍລະດົກແຫ່ງຊາດເຂົ້າເປັນກອງທຶນລວມສູນ, ສາມາດສະໜອງທຶນເຂົ້າໃນການປົກປັກຮັກສາ, ອະນຸລັກ, ບູລະນະ, ປະຕິສັງຂອນມໍລະດົກຂອງຊາດ ແນໃສ່ພັດທະນາ ແລະສົ່ງເສີມວຽກງານກ່ຽວກັບມໍລະດົກ, ຮັກສາໄວ້ຊຶ່ງຄຸນຄ່າຂອງມໍລະດົກທາງ ວັດທະນະທຳ, ປະຫວັດສາດ ແລະທຳມະຊາດ ທີ່ເປັນປັດໄຈຄ້ຳປະກັນການຍືນຍົງຄົງຕົວ ຂອງມໍລະດົກແຫ່ງຊາດ ຕະຫຼອດໄປ.

ມາດຕາ 2  ກອງທຶນມໍຣະດົກແຫ່ງຊາດ

ກອງທຶນມໍຣະດົກແຫ່ງຊາດ ຂຽນຫຍໍ້ວ່າ: "ກມຊ"ແລະຂຽນເປັນພາສາອັງກິດວ່າ:"Heritage Fund" ແມ່ນການຈັດຕັ້ງໜຶ່ງຂອງລັດ, ສ້າງຕັ້ງຂຶ້ນເພື່ອລະດົມທຶນ ນໍາໃຊ້ເຂົ້າໃນວຽກງານກ່ຽວກັບມໍລະດົກທາງວັດທະນະທໍາ, ປະຫວັດສາດ ແລະທໍາມະຊາດ ຊຶ່ງຢູ່ພາຍໃຕ້ການຊີ້ນໍາ ໂດຍກົງຂອງຄະນະກໍາມະການມໍລະດົກແຫ່ງຊາດ ມີໜ້າທີ່ໃນການຄຸ້ມຄອງການເຄື່ອນໄຫວວຽກງານຂອງກອງທຶນ ໃຫ້ມີຄວາມໂປ່ງໃສ ແລະມີປະສິດທິພາບ.

ມາດຕາ 3  ຫຼັກການບໍລິຫານ, ຄຸ້ມຄອງ ແລະນໍາໃຊ້ ກມຊ

ການບໍລິຫານ, ຄຸ້ມຄອງ ແລະນໍາໃຊ້ ກມຊ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ທຸກການຈັດຕັ້ງ ແລະການເຄື່ອນໄຫວຂອງ ກມຊ ຈະຕ້ອງມີການສ້າງແຜນການ, ການຈັດຕັ້ງປະຕິບັດ, ການສະຫຼຸບ, ການກວດກາ ແລະຕີລາຄາເປັນປົກກະຕິຕາມສົກປີງົບປະມານແຫ່ງລັດ, ຮັບປະກັນຄວາມໂປ່ງໃສໃນການບໍລິຫານ ແລະນໍາໃຊ້ກອງທຶນໃຫ້ທັນສະພາບການໃນການປັບປຸງ ແລະແກ້ໄຂວຽກງານ ກມຊ ໃຫ້ບັນລຸຕາມເປົ້າໝາຍ ແລະແຜນການທີ່ວາງໄວ້ໃຫ້ມີປະສິດທິຜົນສູງສຸດ;

2. ການຄຸ້ມຄອງ ແລະນໍາໃຊ້ກອງທຶນ ຕ້ອງປະຕິບັດຕາມຫຼັກການລວມສູນ ແລະເປັນເອກະພາບ ໃນຂອບເຂດທົ່ວປະເທດ ແລະຕາມລະບຽບກົດໝາຍ;

3. ກອງທຶນທີ່ຕັ້ງຢູ່ສູນກາງ ແລະທ້ອງຖິ່ນ ຕ້ອງເປີດບັນຊີເງິນຝາກກອງທຶນ ຢູ່ຄັງເງິນແຫ່ງຊາດ ແລະລາຍຮັບທັງໝົດຂອງກອງທຶນ ຕ້ອງມອບເຂົ້າບັນຊີເງິນຝາກຂອງກອງທຶນ ຕາມລະບຽບການຂອງກະຊວງການເງິນ. ລະບົບວິທີການຖອນເງິນຕ້ອງປະຕິບັດຕາມລະບຽບການຖືບັນຊີ.

4. ການນໍາໃຊ້ກອງທຶນ ຕ້ອງປະຕິບັດຕາມເປົ້າໝາຍທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້ ແລະຕາມແຜນຍຸດທະສາດ ລວມທັງແຜນລາຍຮັບ-ລາຍຈ່າຍປະຈໍາປີຂອງ ກມຊ ທີ່ສະພາບໍລິຫານ ກມຊ ເປັນຜູ້ພິຈາລະນາ ແລ້ວນໍາສະເໜີຕໍ່ຄະນະກໍາມະການມໍຣະດົກແຫ່ງຊາດ ເພື່ອພິຈາລະນາຕົກລົງ ແລະຮັບຮອງ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະການນໍາໃຊ້ກອງທຶນ

ມາດຕາ 4  ແຫຼ່ງລາຍຮັບ

ກອງທຶນມໍຣະດົກແຫ່ງຊາດ ໄດ້ມາຈາກແຫຼ່ງຕ່າງໆ ດັ່ງນີ້:

1. ງົບປະມານຂອງລັດ;
2. ລາຍໄດ້ຈາກການນໍາໃຊ້ຄຸນຄ່າຂອງມໍຣະດົກແຫ່ງຊາດ ເຊັ່ນ ຄ່າການບໍລິການເຂົ້າຊົມ, ຄ່າການຖ່າຍທໍາເພື່ອຈຸດປະສົງທາງການຄ້າ ແລະຄ່າການຄົ້ນຄວ້າວິໄຈມໍຣະດົກແຫ່ງຊາດ;

3. ພັນທະຈາກພາກສ່ວນຕ່າງໆທີ່ດຳເນີນກິດຈະການຊຶ່ງຕິດພັນກັບມໍລະດົກແຫ່ງຊາດ;
4. ການປະກອບສ່ວນ, ການຊ່ວຍເຫຼືອ ຂອງບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທັງພາຍໃນ ແລະຕ່າງປະເທດ;
5. ລາຍໄດ້ຈາກການເຄື່ອນໄຫວກິດຈະກຳກ່ຽວກັບມໍລະດົກແຫ່ງຊາດ ແລະອື່ນໆ.

**ມາດຕາ 5 ພັນທະຈາກກິດຈະການ ທີ່ມີຜົນກະທົບຕໍ່ມໍລະດົກແຫ່ງຊາດ**

ບັນດາໂຄງການທີ່ໄດ້ສົ່ງຜົນກະທົບ ແລະໄດ້ຮັບຜົນປະໂຫຍດຈາກເນື້ອທີ່ດິນ ຫຼືເຂດທີ່ມີສ່ວນກ່ຽວພັນກັບມໍລະດົກສະຖານ ໂດຍທາງກົງ ແລະທາງອ້ອມ ຕ້ອງໄດ້ປະຕິບັດພັນທະເຂົ້າໃນການສຶກສາສຳຫຼວດດ້ານບູຮານວິທະຍາ, ສຶກສາດ້ານມະນຸດວິທະຍາ ເຊັ່ນ ມໍລະດົກວັດທະນະທຳທີ່ເປັນວັດຖຸ, ມໍລະດົກວັດທະນະທຳທີ່ບໍ່ເປັນວັດຖຸ ແລະອື່ນໆ, ພັດທະນາວຽກງານມໍລະດົກວັດທະນະທຳ ຕາມທີ່ໄດ້ກຳນົດໄວ້ໃນສັນຍາພັດທະນາໂຄງການ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາແຫຼ່ງມໍລະດົກວັດທະນະທຳ ດັ່ງນີ້:

1. ຜູ້ດຳເນີນກິດຈະການດ້ານໂຄງການຂຸດຄົ້ນແຮ່ທາດ, ໂຄງການເຂື່ອນໄຟຟ້າພະລັງງານນ້ຳ, ກໍ່ສ້າງສະໜາມກິລາ, ກໍ່ສ້າງເຄຫາສະຖານ ແລະໂຄງການພັດທະນາ ທີ່ມີສ່ວນພົວພັນແຫຼ່ງມໍລະດົກວັດທະນະທຳ, ປະຫວັດສາດ ແລະທຳມະຊາດ ຕ້ອງໄດ້ເສັຍພັນທະສູນຈຸດໜຶ່ງສ່ວນຮ້ອຍ (0.1%) ຂອງມູນຄ່າການຂາຍກະແສໄຟຟ້າທັງໝົດ ໃນແຕ່ລະປີເຂົ້າໃນກອງທຶນມໍລະດົກແຫ່ງຊາດເພື່ອປະກອບສ່ວນເຂົ້າໃນການຄົ້ນຄວ້າ, ສຶກສາສຳຫຼວດ, ຂຸດຄົ້ນຊາກສະຖາປັດຕະຍະກຳສະຖານບູຮານເກົ່າແກ່, ວັດຖຸບູຮານ ທີ່ຝັງໃນພື້ນດິນ ແລະການກອບກູ້ວັດຖຸບູຮານ ທີ່ພົບເຫັນຂຶ້ນມາ ເພື່ອເກັບຮັກສາໄວ້ໃນບ່ອນທີ່ປອດໄພ;

2. ຜູ້ດຳເນີນກິດຈະການດ້ານການສຳຫຼວດ, ການຄົ້ນຄ້ວາ, ວິໄຈມໍລະດົກແຫ່ງຊາດ ແລະຂຸດຄົ້ນທາງບູຮານວິທະຍາ ຕ້ອງເສັຍຄ່າທຳນຽມ ຫ້າສ່ວນຮ້ອຍ (5%) ຂອງມູນຄ່າການຂຸດຄົ້ນເຂົ້າໃນກອງທຶນມໍລະດົກແຫ່ງຊາດ;

3. ບຸກຄົນ, ນິຕິບຸກຄົນ ທີ່ລະເມີດກົດໝາຍທີ່ກ່ຽວຂ້ອງ ຕ້ອງໄດ້ເສັຍຄ່າປັບໃໝ ຫ້າສ່ວນຮ້ອຍ (5%) ຂອງມູນຄ່າກິດຈະການ ຫຼືໂຄງການ;

4. ບຸກຄົນ, ນິຕິບຸກຄົນ ທີ່ດຳເນີນໂຄງການ, ກິດຈະການກ່ຽວກັບ ມໍລະດົກແຫ່ງຊາດ ແລະອື່ນໆ ເຊັ່ນ ເທດສະການວາງສະແດງວັດຖຸບູຮານ, ການວາງສະແດງວັດຖຸພັນມໍລະດົກ ແລະອື່ນໆ ຕ້ອງເສັຍຄ່າທຳນຽມ ສູນຈຸດ ໜຶ່ງສ່ວນຮ້ອຍ (0.1%) ຂອງມູນຄ່າການລົງທຶນ;

5. ການບໍລິການເຜີຍແຜ່ໂຄສະນາລາຍການ, ວາລະສານ, ຮູບພາບ ແລະອື່ນໆ ຕ້ອງເສັຍຄ່າທຳນຽມ ສູນຈຸດຫ້າສ່ວນຮ້ອຍ (0.5%) ຂອງມູນຄ່າການລົງທຶນ;

6. ການນຳເຂົ້າ-ສົ່ງອອກ, ການໂອນ, ການຊື້-ຂາຍ ຕ້ອງເສັຍຄ່າທຳນຽມ ສູນຈຸດຫ້າສ່ວນຮ້ອຍ (0.5%) ຂອງມູນຄ່າລາຍການດັ່ງກ່າວ;

7. ການເກັບຄ່າບໍລິການເຂົ້າຊົມ ຈາກນັກທ່ອງທ່ຽວພາຍໃນ ແລະຕ່າງປະເທດ ໂດຍຜ່ານ ຫຼືບໍ່ຜ່ານການບໍລິການຂອງບໍລິສັດນຳທ່ຽວ ໃຫ້ເກັບປະຕູດຽວ ແຕ່ 5 ໂດລາ ເຖິງ 15 ໂດລາສະຫະ

ລັດຢູ່ຕາມຈຸດຂາຍຕ່າງໆ ຕາມຄວາມເໝາະສົມຂອງແຕ່ລະທ້ອງຖິ່ນ. ສ່ວນລາຍລະອຽດ, ຮູບແບບ ແລະວິທີການເກັບມັ້ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໃນລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະຄ່າບໍລິການ ທີ່ປະກາດໃຊ້ແຕ່ລະໄລຍະ.

### ມາດຕາ 6 ການນຳໃຊ້ກອງທຶນ

ກມຊ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການປົກປັກຮັກສາ, ພັດທະນາມໍລະດົກທາງວັດທະນະທຳ, ປະຫວັດສາດ ແລະທຳມະຊາດແຫ່ງຊາດ ເປັນຕົ້ນ ພັດທະນາ ແລະບູລະນະພື້ນຖານ ໂຄງລ່າງໃຫ້ແກ່ ຕົວເມືອງ, ຂົງເຂດມໍລະດົກໂລກ, ມໍລະດົກພາກພື້ນ, ມໍລະດົກແຫ່ງຊາດ ແລະມໍລະດົກທ້ອງຖິ່ນ;
2. ການຈັດຕັ້ງປະຕິບັດບັນດາກິດຈະກຳທີ່ສອດຄ່ອງກັບແຜນຍຸດທະສາດ ແລະແຜນພັດທະນາມໍລະດົກແຫ່ງຊາດຂອງລັດຖະບານແຫ່ງ ສປປ ລາວ;
3. ການສົ່ງເສີມວຽກງານປົກປັກຮັກສາ, ອະນຸລັກ, ບູລະນະ, ປະຕິສັງຂອນ ແລະຄຸ້ມຄອງມໍລະດົກແຫ່ງຊາດ ລວມທັງການສ້າງຄວາມອາດສາມາດ ແລະພັດທະນາຊັບພະຍາກອນມະນຸດໃນຂະແໜງການດັ່ງກ່າວ, ການຕິດຕາມກວດກາບັນດາກິດຈະການ ແລະໂຄງການພັດທະນາທີ່ມີຜົນກະທົບຕໍ່ມໍລະດົກ ແລະສັງຄົມ, ການສ້າງ ແລະການຈັດຕັ້ງປະຕິບັດແຜນການປົກປັກຮັກສາ, ຄຸ້ມຄອງຊັບພະຍາກອນມໍລະດົກແຫ່ງຊາດແບບຄົບຊຸດ ແລະນຳໃຊ້ມາດຕະການເພື່ອເຮັດໃຫ້ເຈົ້າຂອງໂຄງການດຳເນີນການຫຼຸດຜ່ອນຜົນກະທົບຕໍ່ມໍລະດົກ ແລະສັງຄົມ;
4. ການປົກປັກຮັກສາ, ຄຸ້ມຄອງສິ່ງແວດລ້ອມທຳມະຊາດ ແລະຊີວະນາໆພັນ ແລະການຍົກຍ້າຍ, ຈັດສັນ ແລະພັດທະນາຊຸມຊົນ;
5. ການບູລະນະ, ປະຕິສັງຂອນ, ອະນຸລັກ ແລະສົ່ງເສີມຂົງເຂດທີ່ ເປັນມໍລະດົກແຫ່ງຊາດ ຊຶ່ງຢູ່ໃນເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນລະບຽບການຄຸ້ມຄອງ ຂອງ ກມຊ;
6. ການບໍລິຫານ, ບັນດາກິດຈະການ, ນະໂຍບາຍຕ່າງໆ ທີ່ສອດຄ່ອງກັບດຳລັດສະບັບນີ້;
7. ການສ້າງ ແລະປັບປຸງນິຕິກຳກ່ຽວກັບມໍລະດົກແຫ່ງຊາດ, ມໍລະດົກພາກພື້ນ ແລະທ້ອງຖິ່ນ;
8. ການເຂົ້າຮ່ວມກອງປະຊຸມສຳມະນາ, ການຝຶກອົບຮົມຂອງພະນັກງານກ່ຽວກັບວຽກງານຄຸ້ມຄອງມໍລະດົກທາງວັດທະນະທຳ, ປະຫວັດສາດ ແລະທຳມະຊາດໃນລະດັບທ້ອງຖິ່ນ, ລະດັບຊາດ ແລະລະດັບສາກົນ;
9. ການຈຳລອງແບບ ຫຼືຜະລິດຕະພັນສິ່ງພິມຕ່າງໆເພື່ອຈຳໜ່າຍເປັນສິນຄ້າໂດຍຈັດງານສະແດງມໍລະດົກທາງວັດທະນະທຳ, ປະຫວັດສາດ ແລະທຳມະຊາດ ທັງໃນລະດັບທ້ອງຖິ່ນ, ລະດັບຊາດ ແລະລະດັບສາກົນເພື່ອສົ່ງເສີມອຸດສາຫະກຳການທ່ອງທ່ຽວທາງດ້ານມໍລະດົກວັດທະນະທຳ;
10. ການສ້າງສູນຂໍ້ມູນ ຂ່າວສານ, ໂຄສະນາຜ່ານສື່ຕ່າງໆ, ເຜີຍແຜ່ຂໍ້ມູນດັ່ງກ່າວເປັນພາສາລາວ ແລະພາສາຕ່າງປະເທດຜ່ານລະບົບເຕັກໂນໂລຊີດ້ານການສື່ສານຕາມຄວາມເໝາະສົມ.

ການນຳໃຊ້ກອງທຶນຕ້ອງຮັບປະກັນໃຫ້ບັນດາເປົ້າໝາຍຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ, ມີຄວາມໂປ່ງໃສ ແລະສອດຄ່ອງກັບມາດຕະຖານດ້ານເຕັກນິກທີ່ເໝາະສົມ ແລະມີປະສິດທິພາບ.

### ມາດຕາ 7 ການຈັດແບ່ງການນຳໃຊ້ກອງທຶນ

ກອງທຶນ ໃຫ້ຈັດແບ່ງການນຳໃຊ້ ຕາມເປົ້າໝາຍທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂອງດຳລັດສະບັບນີ້, ໃນນີ້ ຫົກສິບສ່ວນຮ້ອຍ (60%) ແມ່ນໃຫ້ທ້ອງຖິ່ນເປັນຜູ້ນຳໃຊ້ ໂດຍແບ່ງປັນຕາມແຕ່ລະຈຸດ ຫຼືສະຖານທີ່ຕ່າງໆ ແລະສີ່ສິບສ່ວນຮ້ອຍ (40%) ແມ່ນໃຫ້ສູນກາງເປັນຜູ້ນຳໃຊ້ ໂດຍອີງໃສ່ແຜນການນຳໃຊ້ກອງທຶນຂອງຂະແໜງການ ຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວໃນແຕ່ລະປີ, ແຜນການນຳໃຊ້ກອງທຶນ ຊຶ່ງລັດຖະມົນຕີວ່າການ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ເປັນຜູ້ຮັບຮອງ ແລ້ວສະໜີເຂົ້າແຜນງົບປະມານປະຈຳປີຕາມລະບຽບການ, ການໃຊ້ຈ່າຍເງິນກອງທຶນໃຫ້ປະຕິບັດຕາມແຜນລາຍຮັບ-ລາຍຈ່າຍທີ່ລັດຖະບານໄດ້ຮັບຮອງເອົາແລ້ວ.

ສຳລັບຄ່າບໍລິການເຂົ້າຊົມຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂໍ້ 7 ຂອງດຳລັດສະບັບນີ້ ໃຫ້ແບ່ງ ຫ້າສິບສ່ວນຮ້ອຍ (50%) ເຂົ້າໃນກອງທຶນມໍຣະດົກແຫ່ງຊາດ ແລະຫ້າສິບສ່ວນຮ້ອຍ (50%) ເຂົ້າໃນກອງທຶນສົ່ງເສີມການທ່ອງທ່ຽວ.

## ໝວດທີ 3
## ການຄຸ້ມຄອງບໍລິຫານກອງທຶນມໍຣະດົກແຫ່ງຊາດ

### ມາດຕາ 8 ໂຄງປະກອບການຈັດຕັ້ງຂອງ ກມຊ

ກມຊ ປະກອບດ້ວຍ:

1. ສະພາບໍລິຫານຂັ້ນສູນກາງ;
2. ສະພາບໍລິຫານຂັ້ນທ້ອງຖິ່ນ;
3. ກອງເລຂາ ກມຊ ຂັ້ນສູນກາງ ແລະທ້ອງຖິ່ນ.

### ມາດຕາ 9 ສະພາບໍລິຫານ ກມຊ ຂັ້ນສູນກາງ

ສະພາບໍລິຫານ ກມຊ ຂັ້ນສູນກາງ ປະກອບດ້ວຍ ປະທານ, ຮອງປະທານ ແລະກຳມະການຈຳນວນໜຶ່ງ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກຳມະການມໍຣະດົກແຫ່ງຊາດ ຕາມການສະເໜີຂອງ ລັດຖະມົນຕີວ່າການ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ. ສະພາບໍລິຫານ ມີອາຍຸການ ຫ້າ ປີ ແລະຖືກແຕ່ງຕັ້ງຄືນໃໝ່ໄດ້ອີກໜຶ່ງສະໄໝ.

### ມາດຕາ 10 ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານ ກມຊ ຂັ້ນສູນກາງ

ສະພາບໍລິຫານຂອງ ກມຊ ຂັ້ນສູນກາງ ປະກອບດ້ວຍ:

1. ລັດຖະມົນຕີຊ່ວຍວ່າການ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ເປັນປະທານ;
2. ລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ ເປັນຮອງປະທານ;
3. ຫົວໜ້າກົມແຜນການການເງິນ, ກະຊວງ ຖວທ ເປັນກຳມະການ;

4. ຫົວໜ້າກົມວິຈິດສິນ, ກະຊວງ ຖວທ ເປັນກຳມະການ;

5. ຫົວໜ້າກົມຮ່ວມມືສາກົນ, ກະຊວງ ຖວທ ເປັນກຳມະການ;

6. ຫົວໜ້າກົມວັດທະນະທຳມະຫາຊົນ, ກະຊວງ ຖວທ ເປັນກຳມະການ;

7. ຫົວໜ້າກົມຮູບເງົາ, ກະຊວງ ຖວທ ເປັນກຳມະການ;

8. ເລຂາຄະນະກຳມະການແຫ່ງຊາດລາວເພື່ອອຸຍແນດສະໂກ ເປັນກຳມະການ;

9. ຫົວໜ້າກົມພັດທະນາການທ່ອງທ່ຽວ ເປັນກຳມະການ;

10. ຫົວໜ້າກົມມໍຣະດົກ, ກະຊວງ ຖວທ ເປັນກຳມະການ ແລະທັງເປັນຫົວໜ້າກອງເລຂາ ກມຊ.

**ມາດຕາ 11 ໜ້າທີ່ ແລະຂອບເຂດສິດ ຂອງສະພາບໍລິຫານ ກມຊ ຂັ້ນສູນກາງ**

ສະພາບໍລິຫານ ກມຊ ຂັ້ນສູນກາງ ມີໜ້າທີ່ ແລະຂອບເຂດສິດ ດັ່ງນີ້:

1. ຄຸ້ມຄອງບໍລິຫານກອງທຶນມໍຣະດົກແຫ່ງຊາດເພື່ອຜັນຂະຫຍາຍ ແລະຈັດຕັ້ງປະຕິບັດແຜນຍຸດທະສາດ, ຂໍ້ຕົກລົງຂອງຄະນະກຳມະການມໍຣະດົກແຫ່ງຊາດ, ລະບຽບການກອງທຶນ ແລະລະບຽບກົດໝາຍທີ່ກ່ຽວຂ້ອງ;

2. ຄົ້ນຄວ້າ ພິຈາລະນາແຜນການ ແລະແຜນງົບປະມານການເຄື່ອນໄຫວປະຈຳປີຂອງກອງທຶນເພື່ອນຳສະເໜີຕໍ່ຄະນະກຳມະການມໍຣະດົກແຫ່ງຊາດ ພິຈາລະນາຕົກລົງ ແລະຮັບຮອງ;

3. ອອກລະບຽບການກ່ຽວກັບການເຄື່ອນໄຫວວຽກງານພາຍໃນຂອງກອງທຶນ ຕາມການເຫັນດີຂອງຄະນະກຳມະການມໍຣະດົກແຫ່ງຊາດ;

4. ແຕ່ງຕັ້ງບຸກຄະລາກອນ, ກຳນົດໜ້າທີ່ ແລະຂອບເຂດສິດຂອງກອງເລຂາ ກມຊ ແຫ່ງຊາດ;

5. ລະດົມຂົນຂວາຍ ແລະຊອກຫາແຫຼ່ງທຶນ ຈາກບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທັງພາຍໃນ ແລະຕ່າງປະເທດ ເພື່ອປະກອບເຂົ້າກອງທຶນ;

6. ຕິດຕາມ ກວດກາ, ຄຸ້ມຄອງການເຄື່ອນໄຫວ ແລະນຳໃຊ້ກອງທຶນ ໃຫ້ສອດຄ່ອງກັບເປົ້າໝາຍ ແລະແຜນການ ດ້ວຍຄວາມໂປ່ງໃສ ແລະມີປະສິດທິຜົນ;

7. ສະຫຼຸບ, ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ໃຫ້ຄະນະກຳມະການມໍຣະດົກແຫ່ງຊາດ ຢ່າງໜ້ອຍປີລະ ສອງ ຄັ້ງ;

8. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະຊີ້ນຳຂອງຄະນະກຳມະການມໍຣະດົກແຫ່ງຊາດ.

**ມາດຕາ 12 ສິດ ແລະໜ້າທີ່ ຂອງປະທານສະພາບໍລິຫານ ກມຊ ຂັ້ນສູນກາງ**

ປະທານສະພາບໍລິຫານ ກມຊ ຂັ້ນສູນກາງ ມີສິດ ແລະໜ້າທີ່ ຕົ້ນຕໍ ດັ່ງນີ້ :

1. ຊີ້ນຳ, ນຳພາໃນການຈັດຕັ້ງປະຕິບັດວຽກງານຂອງ ກມຊ ໃຫ້ມີຜົນສຳເລັດຕາມຈຸດປະສົງຂອງກອງທຶນ;

2. ເປັນປະທານກອງປະຊຸມສະພາບໍລິຫານ, ເປັນຕົວແທນ ແລະປະຕິບັດໜ້າທີ່ອື່ນ ທີ່ກ່ຽວ

ຂ້ອງໃນລະຫວ່າງກອງປະຊຸມສະພາບໍລິຫານ;

3. ມອບສິດຂອງຕົນໃຫ້ຮອງປະທານເພື່ອປະຕິບັດໜ້າທີ່ແທນຕົນໃນກໍລະນີບໍ່ຢູ່ ຫຼືຕິດພາລະກິດອື່ນ;

4. ເຊີນຜູ້ຕາງໜ້າອົງການຈັດຕັ້ງອື່ນ ລວມທັງພາກລັດ ແລະເອກະຊົນ ເຂົ້າຮ່ວມກອງປະຊຸມສະພາບໍລິຫານ ໃນນາມເປັນຜູ້ສັງເກດການ ເມື່ອເຫັນວ່າ ມີຄວາມເໝາະສົມ.

**ມາດຕາ 13 ກອງປະຊຸມສະພາບໍລິຫານ ກມຊ ຂັ້ນສູນກາງ ແລະຂັ້ນທ້ອງຖິ່ນ**

ກອງປະຊຸມສາມັນຂອງສະພາບໍລິຫານ ກມຊ ຂັ້ນສູນກາງ ແລະຂັ້ນທ້ອງຖິ່ນ ຈັດຂຶ້ນໃນທຸກໆ ສາມເດືອນ, ໃນກໍລະນີມີບັນຫາສໍາຄັນທີ່ຕ້ອງໄດ້ປຶກສາຫາລື ແລະພິຈາລະນາ ຕົກລົງດ່ວນ, ກໍສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາ ຕາມການຮຽກປະຊຸມຂອງປະທານສະພາບໍລິຫານ ຫຼືຕາມການສະເໜີຂອງສະມາຊິກສະພາບໍລິຫານແຕ່ສາມຄົນຂຶ້ນໄປ. ກອງປະຊຸມຈະເປີດຂຶ້ນໄດ້ກໍຕໍ່ເມື່ອມີສະມາຊິກສະພາບໍລິຫານເຂົ້າຮ່ວມເກີນກວ່າເຄິ່ງໜຶ່ງຂອງສະມາຊິກທັງໝົດ.

ມະຕິຂອງກອງປະຊຸມສະພາບໍລິຫານ ຈະມີຜົນນໍາໃຊ້ໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງສ່ວນຫຼາຍ ຮັບຮອງເອົາ ໂດຍຖືເອົາໜຶ່ງຄົນໜຶ່ງສຽງ.

**ມາດຕາ 14 ເບັ້ຍປະຊຸມ**

ສະມາຊິກສະພາບໍລິຫານ ທີ່ເຂົ້າຮ່ວມກອງປະຊຸມສະພາບໍລິຫານ ຈະໄດ້ຮັບເບັ້ຍເຂົ້າຮ່ວມປະຊຸມ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການຂອງກະຊວງການເງິນ.

**ມາດຕາ 15 ກອງເລຂາ ກມຊ ຂັ້ນສູນກາງ**

ກອງເລຂາ ກມຊ ຂັ້ນສູນກາງ ເປັນເສນາທິການຊ່ວຍວຽກ ຂອງສະພາບໍລິຫານ ກມຊ ຂັ້ນສູນກາງ ໃນການປະຕິບັດໜ້າທີ່ ແລະຂອບເຂດສິດ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້ ແລະລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

ມອບໃຫ້ສະພາບໍລິຫານ ກມຊ ຂັ້ນສູນກາງ ເປັນຜູ້ປະກອບບຸກຄະລະກອນ ພ້ອມທັງກໍານົດໜ້າທີ່ ແລະຂອບເຂດສິດ ລະອຽດຂອງກອງເລຂາ ກມຊ ຂັ້ນສູນກາງ ຕາມການເຫັນດີຂອງຄະນະກໍາມະການມໍຣະດົກແຫ່ງຊາດ.

**ມາດຕາ 16 ສະພາບໍລິຫານ ກມຊ ຂັ້ນທ້ອງຖິ່ນ**

ສະພາບໍລິຫານ ກມຊ ຂັ້ນທ້ອງຖິ່ນ ປະກອບດ້ວຍ ປະທານ, ຮອງປະທານ ແລະກໍາມະການຈໍານວນໜຶ່ງ ທີ່ມາຈາກຂະແໜງການທີ່ກ່ຽວຂ້ອງຢູ່ຂັ້ນທ້ອງຖິ່ນ ຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກໍາມະການມໍຣະດົກແຫ່ງຊາດ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນ. ສະພາບໍລິຫານ ມີອາຍຸການ ຫ້າ ປີ ແລະຖືກແຕ່ງຕັ້ງຄືນໃໝ່ໄດ້ອີກໜຶ່ງສະໄໝ.

**ມາດຕາ 17 ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານ ກມຊ ຂັ້ນທ້ອງຖິ່ນ**

ສະພາບໍລິຫານຂອງ ກມຊ ຂັ້ນທ້ອງຖິ່ນ ປະກອບດ້ວຍ:

1. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ, ຜູ້ຊີ້ນຳວຽກງານ ຖວທ ເປັນປະທານ;
2. ຫົວໜ້າພະແນກການເງິນແຂວງ, ນະຄອນ ເປັນຮອງປະທານ;
3. ຫົວໜ້າພະແນກແຜນການ ແລະການລົງທຶນແຂວງ, ນະຄອນ ເປັນຮອງປະທານ;
4. ຫົວໜ້າພະແນກສ່ວຍສາອາກອນແຂວງ, ນະຄອນ ເປັນກຳມະການ;
5. ຫົວໜ້າພະແນກ ຖວທ ແຂວງ, ນະຄອນ, ເປັນກຳມະການ ແລະທັງເປັນຫົວໜ້າກອງເລຂາ.

**ມາດຕາ 18 ໜ້າທີ່ ແລະຂອບເຂດສິດ ຂອງສະພາບໍລິຫານ ກມຊ ຂັ້ນທ້ອງຖິ່ນ**

ສະພາບໍລິຫານ ກມຊ ຂັ້ນທ້ອງຖິ່ນ ມີໜ້າທີ່ ແລະຂອບເຂດສິດອັນດຽວກັນກັບສະພາບໍລິຫານ ກມຊ ຂັ້ນສູນກາງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງດຳລັດສະບັບນີ້.

**ມາດຕາ 19 ກອງເລຂາ ກມຊ ຂັ້ນທ້ອງຖິ່ນ**

ກອງເລຂາ ກມຊ ຂັ້ນທ້ອງຖິ່ນ ເປັນເສນາທິການຊ່ວຍວຽກ ຂອງສະພາບໍລິຫານ ກມຊ ຂັ້ນທ້ອງຖິ່ນໃນການປະຕິບັດໜ້າທີ່ ແລະຂອບເຂດສິດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

ມອບໃຫ້ສະພາບໍລິຫານ ກມຊ ຂັ້ນທ້ອງຖິ່ນ ເປັນຜູ້ປະກອບບຸກຄະລາກອນ ພ້ອມທັງກຳນົດໜ້າທີ່ ແລະຂອບເຂດສິດລະອຽດ ຂອງກອງເລຂາ ກມຊ ຂັ້ນທ້ອງຖິ່ນ ຕາມການເຫັນດີຂອງຄະນະກຳມະການມໍຣະດົກແຫ່ງຊາດຂັ້ນທ້ອງຖິ່ນ.

## ໝວດທີ 4
## ການກວດສອບ ແລະລະບອບການລາຍງານ

**ມາດຕາ 20 ການກວດສອບບັນຊີ**

ບັນຊີຂອງກອງທຶນມໍຣະດົກແຫ່ງຊາດ ຕ້ອງໄດ້ຮັບການກວດສອບທຸກໆ ປີ ໂດຍອົງການກວດສອບແຫ່ງລັດ, ໃນກໍລະນີ ຫາກພົບເຫັນວ່າມີການກະທຳຜິດ, ຜູ້ທີ່ກະທຳຜິດດັ່ງກ່າວຕ້ອງຖືກດຳເນີນຄະດີຕາມກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 21 ການລາຍງານ**

ສະພາບໍລິຫານ ກມຊ ຕ້ອງສົ່ງບົດລາຍງານການເຄື່ອນໄຫວວຽກງານຂອງກອງທຶນໃຫ້ຄະນະກຳມະການມໍຣະດົກແຫ່ງຊາດ ຢ່າງເປັນປົກກະຕິ. ການລາຍງານທາງດ້ານການເງິນປະຈຳປີ ຕ້ອງປະຕິບັດຕາມລະບອບການລາຍງານ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 5

## ບົດບັນຍັດສຸດທ້າຍ

**ມາດຕາ 22  ເຄື່ອງໝາຍ ແລະຕາປະທັບ**

ກມຊ ມີເຄື່ອງໝາຍ ແລະຕາປະທັບ ເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 23  ການຈັດຕັ້ງປະຕິບັດ**

ຄະນະກຳມະການມໍຣະດົກແຫ່ງຊາດ ມີໜ້າທີ່ຈັດຕັ້ງການເຜີຍແຜ່, ແນະນຳ ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ ແລະລາຍງານການເຄື່ອນໄຫວຮອບດ້ານຂອງກອງທຶນມໍຣະດົກແຫ່ງຊາດ ໃຫ້ລັດຖະບານ ປີລະ ສອງ ຄັ້ງ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 24  ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານແຫ່ງ ສ ປປ ລາວ

ນາຍົກລັດຖະມົນຕີ,

ທອງລຶງ ທຳມະວົງ